ລັດຄາລິຟໍເນຍ—ອົງການບໍລິການສຸຂະພາບ ແລະ ມະນຸດ
**ພະແນກພັດທະນາການບໍລິການ**
1215 O Street, Sacramento, CA 95814
www.dds.ca.gov

NANCY BARGMANN
*ຜູ້ອໍານວຍການ*

GAVIN NEWSOM
*ຜູ້ວ່າການລັດ*

ວັນທີ 29 ກັນຍາ 2023

ເຖິງ: ບັນດາຜູ້ອໍານວຍການສູນພາກພື້ນ

ເລື່ອງ: ໂຄງການກໍານົດດ້ວຍຕົນເອງ: ກວດປະຫວັດຜູ້ໃຫ້ບໍລິການ

ຈຸດປະສົງຂອງຈົດໝາຍສະບັບນີ້ແມ່ນເພື່ອກໍານົດຜູ້ໃຫ້ບໍລິການ ແລະການຊ່ອຍເຫຼືອທີ່ຕ້ອງໄດ້ຮັບການກວດປະຫວັດອາຊະຍາກໍາ ເພື່ອໃຫ້ການບໍລິການແກ່ຜູ້ເຂົ້າຮ່ວມໃນໂຄງການກໍານົດຕົນເອງ (SDP) ຕາມກົດໝາຍ ສະຫວັດດີການ ແລະ ສະຖາບັນ ພາກ 4685.8(v). ຈົດໝາຍສະບັບນີ້, ໂດຍມີຂໍ້ມູນເພີ່ມເຕີມຂ້າງລຸ່ມນີ້ກ່ຽວກັບຂໍ້ກໍານົດຕ່າງໆໃນການກວດປະຫວັດ, ໃຫ້ບໍລິການເພື່ອຊີ້ແຈງຄໍາແນະນໍາໃນ ວັນທີ 4 ພະຈິກ 2019.

ບຸກຄົນຕໍ່ໄປນີ້ແມ່ນຈໍາເປັນຕ້ອງໄດ້ຮັບການກວດປະຫວັດດ້ານອາຊະຍາກໍາຂອງພະແນກບໍລິການດ້ານພັດທະນາການ (ພະແນກ):

- ພະນັກງານຂອງຜູ້ເຂົ້າຮ່ວມໂຄງການ SDP ທີ່ຈະໃຫ້ບໍລິການ ການດູແລສ່ວນບຸກຄົນໂດຍກົງ, ໃນນີ້ບໍ່ລວມສະມາຊິກຄອບຄົວທີ່ໄດ້ຮັບຄ່າຈ້າງເພື່ອໃຫ້ການບໍລິການການດູແລສ່ວນບຸກຄົນໂດຍກົງທີ່ອາໄສຢູ່ໃນເຮືອນຫຼັງດຽວກັນກັບຜູ້ເຂົ້າຮ່ວມ.
- ພະນັກງານໃດໜຶ່ງຂອງຜູ້ໃຫ້ບໍລິການທີ່ບໍ່ແມ່ນຜູ້ຂາຍສູນພາກພື້ນ ແລະ ຈະໃຫ້ບໍລິການການດູແລສ່ວນບຸກຄົນໂດຍກົງກັບຜູ້ເຂົ້າຮ່ວມໂຄງການ SDP.

ບຸກຄົນຕໍ່ໄປນີ້ແມ່ນບໍ່ຈໍາເປັນທີ່ຈະຕ້ອງກວດປະຫວັດອາຊະຍາກໍາຂອງພະແນກ:

- ພະນັກງານໃດໜຶ່ງຂອງຜູ້ໃຫ້ບໍລິການທີ່ເປັນຜູ້ຂາຍຂອງສູນພາກພື້ນທີ່ຈະໃຫ້ບໍລິການ ການດູແລສ່ວນບຸກຄົນໂດຍກົງກັບຜູ້ເຂົ້າຮ່ວມໂຄງການ SDP, ຍົກເວັ້ນຜູ້ຂາຍນັ້ນຮຽກຮ້ອງໃຫ້ມີການກວດປະຫວັດ.

ນອກຈາກນັ້ນ, ຜູ້ເຂົ້າຮ່ວມຂອງ SDP ຫຼືຜູ້ໃຫ້ບໍລິການດ້ານການຄຸ້ມຄອງທາງດ້ານການເງິນ (FMS) ຂອງເຂົາເຈົ້າອາດຈະຮ້ອງຂໍໃຫ້ມີການກວດສອບປະຫວັດອາຊະຍາກໍາຂອງພະແນກໃຫ້ພະນັກງານ ຫຼື ຜູ້ໃຫ້ບໍລິການທີ່ຈ່າຍເພື່ອໃຫ້ໄດ້ບໍລິການຜ່ານແຜນການໃຊ້ຈ່າຍຂອງຜູ້ເຂົ້າຮ່ວມ.

ຜູ້ໃຫ້ບໍລິການ FMS ຂອງຜູ້ເຂົ້າຮ່ວມຈະຊ່ອຍຜູ້ໃຫ້ບໍລິການທີ່ກ່ຽວຂ້ອງໃນຂະບວນການນີ້ໂດຍການນໍາພວກເຂົາໄປຫາສະຖານທີ່ທີ່ເໝາະສົມທີ່ສາມາດເອົາລາຍນິ້ວມືໄດ້. ເປັນການແຈ້ງເຕືອນ, ຄ່າໃຊ້ຈ່າຍສໍາລັບການພິມລາຍນິ້ວມືແມ່ນຄວາມຮັບຜິດຊອບຂອງຜູ້ໃຫ້ບໍລິການ.

ຖ້າທ່ານມີຄຳຖາມໃດໆກ່ຽວກັບຂໍ້ກຳນົດການກວດປະຫວັດອາຊະຍາກຳ, ກະລຸນາສົ່ງອີເມວ sdpbackground@dds.ca.gov.

ດ້ວຍຄວາມເຄົາລົບ,

*ຕົ້ນສະບັບລົງນາມໂດຍ:*

ປອ. VICKI L. SMITH
ຮອງຜູ້ອຳນວຍການ
ຂະແໜງການພັດທະນານະໂຍບາຍ ແລະ ແຜນງານ

ສຳເນົາເຖິງ: ບັນດາຜູ້ບໍລິຫານໃນສູນພາກພື້ນ
ຜູ້ອຳນວຍການສູນພາກພື້ນຂອງການບໍລິການຜູ້ບໍລິໂພກສູນ
ກາງການບໍລິການຂຸມຊົນຜູ້ອຳນວຍການສະມາຄົມຂອງອົງກາ
ນສູນກາງພາກພື້ນ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາ
Nancy Bargmann, ພະແນກບໍລິການດ້ານພັດທະນາການ
Brian Winfield, ພະແນກບໍລິການດ້ານພັດທະນາການ
Carla Castañeda, ພະແນກບໍລິການດ້ານພັດທະນາການ
Jim Knight, ພະແນກບໍລິການດ້ານພັດທະນາ
Ernie Cruz, ພະແນກບໍລິການດ້ານພັດທະນາການ
Suzy Requarth, ພະແນກບໍລິການດ້ານພັດທະນາ
Kathleen Dempsey, ພະແນກບໍລິການດ້ານການພັດທະນາ